# ຂໍ້ຫ້າມສຳລັບປະຊາຊົນ



ກົດໝາຍວ່າດ້ວຍປ່າໄມ້ ມາດຕາ102.
ຫ້າມປະຊາຊົນ ມີພຶດຕິກຳດັ່ງນີ້:









1. ທຳລາຍປ່າໄມ້ ດ້ວຍການບຸກລຸກ, ບຸກເບີກ ຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ການໄມ້ ຫລື ບາກໄມ້ເປັນສາເຫດ ໃຫ້ຕົ້ນໄມ້ຕາຍ ຫລື ດ້ວຍການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
2. ເຂົ້າໄປຕັ້ງຖິ່ນຖານ ຢູ່ເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຫລື ທຳການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຕັດ, ຊື້-ຂາຍ, ເຄື່ອນຍ້າຍ ຫລື ເກັບກູ້ໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ພິເສດ ທີ່ ໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ: ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ປະດົງ, ໄມ້ກໍາລໍ, ໄມ້ໄລ່ງເລ່ງ, ໄມ້ຈຳປາປ່າ;
4. ຈັບຈອງ ດົງໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້;
5. ຮ່ວມມື ກັບນັກທຸລະກິດ, ພະນັກງານ ຫລື ເຈົ້າໜ້າທີ່ ໃນການລັກລອບຕັດໄມ້, ບຸກລຸກທຳລາຍປ່າໄມ້ ແລະ ຊັບສະພະຍາກອນປ່າໄມ້;
6. ປອມແປງເອກະສານ, ຕາປະທັບ ແລະ ຄ້ອນຕີກາໄມ້;
7. ໃຊ້ຄວາມຮຸນແຮງ ແລະ ຂອງຍ້ອງທີ່ຜູ້ອື່ນເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ຫລື ຜູ້ອື່ນ;
8. ຍ້າຍ, ປ່ຽນແປງ ຫລື ທຳລາຍ ເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
9. ຊື້-ຂາຍໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ;
10. ມີພຶດຕິກຳອື່ນທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.



ຊີດເອ-ລາວ
ໂທ: 021453995
ແຟັກ: 021453995, ຕູ້ໄປສະນີ 2795